ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 152 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 08-12-2023

# ຂໍ້ຕົກລົງ

## ວ່າດ້ວຍການແຕ່ງຕັ້ງຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ (ຄຊກລ)

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ (ສະບັບປັບປຸງ) ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021.
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍລະບຽບການ ແລະ ກົນໄກການເຮັດວຽກ ຂອງລັດຖະບານ ຊຸດທີ IX ສະບັບເລກທີ 41/ນຍ, ລົງວັນທີ 30 ເມສາ 2021.
- ອີງຕາມ ແຈ້ງການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 76/ຫສນຍ, ລົງວັນທີ 30 ພຶດສະພາ 2023.
- ອີງຕາມ ໜັງສືສະເໜີ ຂອງກະຊວງການຕ່າງປະເທດ ສະບັບເລກທີ 7416/ຕປທ.ຈສກ.1, ລົງວັນທີ 30 ພະຈິກ 2023.

### ນາຍົກລັດຖະມົນຕີ ຕົກລົງ:

ມາດຕາ 01: ກຳນົດທີ່ຕັ້ງ ແລະ ພາລະບົດບາດ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຄື: ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ (ຄຊກລ) ແມ່ນການຈັດຕັ້ງໜຶ່ງທີ່ບໍ່ປະຈຳການ, ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານໃນການຄຸ້ມຄອງມະຫາພາກ, ເປັນຄະນະຊີ້ນຳວຽກງານ, ບໍລິຫານຄຸ້ມຄອງ, ກວດກາວຽກງານ ແລະ ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການຈັດຕັ້ງພາຍໃນ ແລະ ຕ່າງປະເທດທີ່ກ່ຽວຂ້ອງ ໃນການແກ້ໄຂບັນຫາລະເບີດບໍ່ທັນແຕກ.

ມາດຕາ 02: ແຕ່ງຕັ້ງຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ (ຄຊກລ), ຊຶ່ງປະກອບດ້ວຍກະຊວງຂະແໜງການ ດັ່ງນີ້:

1. ທ່ານ ລັດຖະມົນຕີ ກະຊວງການຕ່າງປະເທດ — ເປັນປະທານ
2. ທ່ານ ຮອງລັດຖະມົນຕີ ກະຊວງການຕ່າງປະເທດ ✓ — ເປັນຮອງປະທານ, ທັງເປັນຜູ້ປະຈຳການ
3. ທ່ານ ຮອງລັດຖະມົນຕີ ກະຊວງປ້ອງກັນປະເທດ — ເປັນຮອງປະທານ
4. ທ່ານ ຮອງລັດຖະມົນຕີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ — ເປັນຮອງປະທານ
5. ທ່ານ ຮອງລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ — ເປັນກຳມະການ
6. ທ່ານ ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ — ເປັນກຳມະການ
7. ທ່ານ ຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ — ເປັນກຳມະການ
8. ທ່ານ ຮອງລັດຖະມົນຕີ ກະຊວງສາທາລະນະສຸກ — ເປັນກຳມະການ
9. ທ່ານ ຮອງລັດຖະມົນຕີ ກະຊວງຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ — ເປັນກຳມະການ
10. ທ່ານ ຮອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ — ເປັນກຳມະການ



CS CamScanner

11. ທ່ານ ຮອງລັດຖະມົນຕີ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນກຳມະການ

12. ທ່ານ ຮອງເລຂາຄະນະບໍລິຫານງານສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ ເປັນກຳມະການ

13. ທ່ານ ຮອງປະທານ ສູນກາງສະຫະພັນແມ່ຍິງລາວ ເປັນກຳມະການ

14. ທ່ານ ຫົວໜ້າກົມໃຫຍ່ເສນາທິການກອງທັບ ກະຊວງປ້ອງກັນປະເທດ ເປັນກຳມະການ

15. ທ່ານ ຫົວໜ້າກົມ ອົງການຈັດຕັ້ງສາກົນ ເປັນກຳມະການ, ທັງເປັນຫົວໜ້າກອງເລຂາ

ມາດຕາ 03: ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ມີຫ້ອງການຊ່ວຍວຽກທີ່ເອີ້ນວ່າ: ຫ້ອງການ ຄຊກລ ເປັນຫ້ອງການຊ່ວຍວຽກ ຂອງ ຄຊກລ ພາຍໃຕ້ການຊີ້ນຳຂອງປະທານ ຄຊກລ ຜ່ານກອງເລຂາປະທານ (ກົມອົງການຈັດຕັ້ງສາກົນ), ຊຶ່ງປະກອບມີໜ່ວຍງານວິຊາການຕ່າງໆທີ່ປະກອບເຂົ້າປະຕິບັດໜ້າວຽກຕາມພາລະບົດບາດ ແລະ ໜ້າທີ່ ຕາມຄວາມເໝາະສົມ. ຫ້ອງການ ຄຊກລ ປະກອບມີ ຫົວໜ້າຫ້ອງການ 01 ທ່ານ ຊຶ່ງຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງໂດຍປະທານ ຄຊກລ ຕາມການເຫັນດີຂອງຄະນະກຳມະການຄຸ້ມຄອງແຫ່ງຊາດ ແລະ ໂດຍຜ່ານກົນໄກການປຶກສາຫາລື, ການສຳພາດ ແລະ ເຫັນດີຈາກອົງການ ສປຊ ເພື່ອການພັດທະນາ ປະຈຳ ສປປ ລາວ ກໍ່ຄືບັນດາຜູ້ໃຫ້ທຶນ. ຮອງຫົວໜ້າຫ້ອງການມີ ຈຳນວນ 02 ທ່ານ ຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງໂດຍປະທານ ຄຊກລ ຕາມການສະເໜີຂອງກອງປະຊຸມຄະນະກຳມະການຄຸ້ມຄອງແຫ່ງຊາດ, ໂດຍຜ່ານຂະບວນການຂອງອົງການ ສປຊ.

ມາດຕາ 06: ຄະນະກຳມະການຄຸ້ມຄອງຂັ້ນແຂວງແມ່ນໃຫ້ມີໂຄງຮ່າງທີ່ຮັດກຸມເຂົ້າ, ປະກອບເອົາພະແນກການທີ່ກ່ຽວຂ້ອງໂດຍກົງຄື: ຮອງເຈົ້າແຂວງເປັນຜູ້ຊີ້ນຳ, ພະແນກການຕ່າງປະເທດ(ເປັນຈຸດປະສານງານຫລັກ), ພະແນກແຮງງານ ແລະ ສະຫວັດດີການສັງຄົມ, ກອງບັນຊາການປ້ອງກັນປະເທດແຂວງ, ປ້ອງກັນຄວາມສະຫງົບແຂວງ, ພະແນກສຶກສາທິການ ແລະ ກິລາ ແລະ ພະແນກສາທາລະນະສຸກ ສ່ວນພະແນກອື່ນໆທີ່ມີວຽກໃນບາງກໍລະນີແມ່ນສາມາດມີສ່ວນຮ່ວມຕາມການຊີ້ນຳຂອງແຂວງ.

ມາດຕາ 07: ມອບໃຫ້ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ປັບປຸງດຳລັດ ວ່າດ້ວຍ ການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງສະບັບເລກທີ 210/ລບ, ລົງວັນທີ 29 ກໍລະກົດ 2022 ເພື່ອເປັນພື້ນຖານໃນການດຳເນີນວຽກງານ ຄຊກລ ແລະ ຄົ້ນຄວ້າອອກຂໍ້ກຳນົດ, ກົດລະບຽບທີ່ກ່ຽວຂ້ອງໃນການຄຸ້ມຄອງວຽກງານລະເບີດບໍ່ທັນແຕກທີ່ຕົກຄ້າງ.

ມາດຕາ 08: ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ບັນດາກະຊວງ, ອົງການ ແລະ ທ້ອງຖິ່ນກ່ຽວຂ້ອງພ້ອມດ້ວຍບັນດາທ່ານທີ່ຖືກແຕ່ງຕັ້ງ ຈົ່ງຮັບຮູ້ ແລະ ປະຕິບັດຕາມຂໍ້ຕົກລົງນີ້ ຢ່າງເຂັ້ມງວດ.

ມາດຕາ 09: ບັນດາຂໍ້ຕົກລົງ, ຂໍ້ກຳນົດ ແລະ ລະບຽບການອື່ນໆ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກລົບລ້າງ.

ມາດຕາ 10: ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ສອນໄຊ ສີພັນດອນ